*Souphanouvong University Journal of Multidisciplinary Research and Development*
*2025, Vol. 11, Special Issue, 01-07*
*https://doi.org/10.69692/SUJMRD11Special01*

# A Study on Student Satisfaction with the Management and Administration of Dormitories at Souphanouvong University

**Vienganousouk Inthavong*[1], Vira ANOLAC[2], Toulakone SOULIYA[3], Khamxay CHANHTHAHONG[4]**

*Department of Student Activity Management, Academic Management Office, Souphanouvong University Lao PDR*

***Correspondence:**
VienganousoukInthavong,
*Department of Students Activity Management, Academic Management office, Souphanouvong University* . Tel: 020 56463545, E-mail: anousoukvirng@gmail.com

***Article Info:***

**Submitted: November 20, 2025**
**Revised: December 10, 2025**
**Accepted: December 18, 2025**

**Abstract**

This study aimed to examine students' satisfaction with the management and administration of the dormitories at Souphanouvong University. The study employed a quantitative research design. The target population consisted of students residing in the university dormitories from Years 1 to 4 during the 2024 –2025 academic year, totaling 134 students, of whom 107 were female. The primary instrument used for data collection was a questionnaire. The collected data were analyzed using descriptive statistics, including the mean ($\bar{X}$) and standard deviation (SD). The results of the study revealed that students' satisfaction with dormitory management and administration ranged from low to moderate. Specifically, satisfaction with services and facilities, management and administration, welfare, and policies was generally at a low level overall. Meanwhile, satisfaction with rules and regulations, dormitory staff, and internal dormitory activities was found to be at a moderate level only.

***Key words:*** *satisfication, Dormitory management and service, Student*

## 1. ພາກສະເໜີ

ມະຫາວິທະຍາໄລສຸພານຸວົງ ແມ່ນໜຶ່ງໃນສີ່ມະຫາວິທະຍາໄລ ຂອງ ສປປ ລາວ ໂດຍໄດ້ຮັບການສ້າງຕັ້ງຂຶ້ນຕາມດຳ ລັດຂອງ ນາຍົກລັດຖະມົນຕີ ສະບັບເລກທີ 169/ນຍ, ລົງວັນທີ 04 ພະຈິກ 2003 ແລະ ໄດ້ໄຂສົກ ຮຽນຄັ້ງປະຖົມມະລຶກ ໃນວັນທີ 5 ພະຈິກ 2003 ທີ່ວິທະຍາເຂດ ບ້ານນາສ້າງເຫວີຍ, ນະຄອນຫຼວງພະບາງແຂວງ ຫຼວງພະບາງ ມະຫາວິທະຍາ ໄລ ສຸພານຸວົງ ເປັນສູນກາງທາງດ້ານການ ສຶກສາ ຢູ່ໃນພາກເໜືອຂອງ ສປປ ລາວ ແລະ ທັງເປັນສະຖາບັນການ ສຶກສາຊັ້ນສູງຂອງລັດ, ເປັນສູນກາງການສຶກສາ ແລະ ວັດທະນະທຳ ແຫ່ງຊາດທີ່ຢູ່ພາຍໃຕ້ການຊີ້ນຳ ແລະ ຄຸ້ມຄອງໂດຍກົງຈາກກະ ຊວງ ສຶກສາທິການ ແລະ ກິລາ ປັດຈຸບັນ ມະຫາວິທະຍາໄລ ສຸພານຸວົງ ໄດ້ເປີດຫຼັກສູດລະດັບ ປະລິນຍາຕີ, ປະລິນຍາໂທ ແລະ ກຽມເປີດລະດັບ ປະລິນຍາເອກ ໃນມໍ່ໆນີ້ (ມະຫາວິທະຍາໄລ ສຸພານຸວົງ, 2025) ໃນນີ້ ສ່ວນຫຼວງຫຼາຍແມ່ນມາຈາກຕ່າງແຂວງ ແລະ ຕ່າງເມືອງ ເຊິ່ງຕ້ອງໄດ້ ອາໃສຫໍພັກ ໃນມະຫາວິທະຍາໄລ ສຸພານຸວົງ, ຫ້ອງເຊົ່າ ຫຼື ເຮືອນຂອງ ຍາດຕິພີ່ນ້ອງເປັນບ່ອນເພິ່ງພາອາໃສ ໃນຊ່ວງໄລຍະການສຶກສາຮ່ຳຮຽນ. ແຕ່ສ່ວນຫຼາຍແລ້ວ ແມ່ນນັກສຶກສາແມ່ນເລື່ອກເຂົ້າພັກອາໃສໃນຫໍພັກ ເນື່ອງຈາກວ່າມັນຢູ່ໃກ້ຫ້ອງຮຽນ ການເດີນທາງໄປຫ້ອງຮຽນກໍສະດວກ ແລະ ບໍ່ຈຳເປັນຕ້ອງໄດ້ໃຊ້ພາຫານະໃນການເດີນທາງ.

ສະນັ້ນຫໍພັກນັກສຶກສາໃນມະຫາວິທະຍາໄລ ຈຶ່ງເປັນສ່ວນ ໜຶ່ງຂອງລະບົບກິດຈະການນັກສຶກສາ ເຊິ່ງເປັນເຄື່ອງມືສຳຄັນໃນການຫຼໍ່ ຫຼອມແລະພັດທະນາບຸກຄະລິກຂອງນັກສຶກສາ ໃຫ້ສາມາດປັບຕົນ ແລະ ດຳລົງຊີວິດຮ່ວມກັບຜູ້ອື່ນໃນສັງຄົມໄດ້ຢ່າງມີຄວາມສຸກ. ນອກຈາກ ນັ້ນ ຫໍພັກຍັງມີບົດບາດສຳຄັນໃນການເປັນແຫຼ່ງສະໜັບສະໜູນ ໃຫ້ການສຶກສາຂອງນັກສຶກສາເປັນໄປຢ່າງຮາບລື່ນ ມີປະສິດທິຜົນ ແລະ ສົ່ງເສີມໃຫ້ສະຖາບັນອຸດົມສຶກສາມີບັນຍາກາດທາງວິຊາການຢ່າງແທ້ ຈິງ. ຫໍພັກນັກສຶກສາທີ່ດີ ຈຶ່ງຄວນມີລັກສະນະເປັນ “ສູນການຮຽນຮູ້ ແລະ ທີ່ພັກອາໄສ” ທີ່ຊ່ວຍເສີມປະສິດທິພາບໃຫ້ແກ່ນັກສຶກສາ ແລະຫໍ ພັກນັກສຶກສາຍັງຊ່ວຍແກ້ໄຂຫຼືຫຼຸດຜ່ອນບັນຫາຕ່າງໆ ທີ່ເກີດຂຶ້ນກັບ ນັກສຶກສາໃນຂະນະດຳລົງຊີວິດຢູ່ໃນມະຫາວິທະຍາໄລ ເພື່ອໃຫ້ນັກສຶກ ສາສາມາດສຶກສາໄດ້ໂດຍບໍ່ມີອຸປະສັກ. ນອກຈາກນັ້ນ ຫໍພັກຍັງຈັດ ບໍລິການແລະສະວັດດີການຕ່າງໆ ສຳລັບນັກສຶກສາ, ສົ່ງເສີມໃຫ້ນັກສຶກ ສາເຂົ້າຮ່ວມກິດຈະກຳເສີມຫຼັກສູດ ແລະ ດູແລນັກສຶກສາໃຫ້ປະພຶດຕົນ ຢູ່ໃນລະບຽບວິໄນທີ່ເໝາະສົມ ແລະ ຖືກຕ້ອງ (Chanakun et al., 2022). ນອກຈາກນັ້ນຫໍພັກໃນມະຫາວິທະຍາໄລຍັງມີບົດບາດສຳຄັນ ຫຼາຍໃນການຄຸ້ມຄອງການສຶກສາ ຫຼຸດຜ່ອນບັນຫາການເດີນທາງທີ່ເສຍ ເວລາ ແລະ ລາຄາແພງ ແລະ ຊ່ວຍໃຫ້ນັກຮຽນເຂົ້າຮ່ວມການຮຽນ-ການສອນ ແລະ ກິດຈະກຳນອກຫຼັກສູດຕ່າງໆໄດ້ຢ່າງເຕັມສ່ວນ. ພ້ອມ

*Copyright © 2025 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (http://creativecommons.org/licenses/by-nc-nd/4.0/)*

ກັນນັ້ນ, ຫໍພັກຍັງເປັນແຫຼ່ງຂອງປະສົບການຊີວິດທີ່ສຳຄັນ. ນັກສຶກສາຈະໄດ້ຝຶກການຢູ່ກັບຜູ້ອື່ນ, ຮຽນຮູ້ການປັບຕົວ, ສ້າງມະນຸດສຳພັນ, ແກ້ໄຂຂໍ້ຂັດແຍ່ງ ແລະ ຝຶກຝົນຫຼໍ່ຫຼອມ, ຄວາມຮັບຜິດຊອບຕໍ່ຕົນເອງ ແລະ ຊຸມຊົນ ເຊິ່ງເປັນທັກສະຊີວິດທີ່ຈຳເປັນຕໍ່ການດຳລົງຊີວິດໃນສັງຄົມພາຍຫຼັງຮຽນຈົບ. ໃນດ້ານຄວາມປອດໄພ, ຫໍພັກຂອງມະຫາວິທະຍາໄລມັກຈະມີມາດຕະການຮັກສາຄວາມປອດໄພຢ່າງເຂັ້ມງວດເຊັ່ນ: ກວດກາການເຂົ້າ-ອອກ, ລະບົບກ້ອງວົງຈອນປິດ, ແລະ ມີກອງຮັກສາຄວາມປອດໄພຕະຫຼອດ 24 ຊົ່ວໂມງ ເຊິ່ງສາມາດຊ່ວຍປ້ອງກັນອັນ ຕະລາຍ ແລະ ສ້າງຄວາມໝັ້ນໃຈໃຫ້ກັບນັກຮຽນ ແລະ ພໍ່ແມ່ນັກຮຽນ. ຍິ່ງໄປກວ່ານັ້ນ, ຫໍພັກຂອງມະຫາວິທະຍາ ໄລມັກຈະຈັດໃຫ້ມີສະພາບແວດລ້ອມທີ່ເໝາະສົມກັບການຮຽນ ເຊັ່ນ: ຫ້ອງອ່ານ, ຫ້ອງປະຊຸມ, ກຸ່ມສອນ, ຫ້ອງສະມາທິ ຫຼື ກິດຈະກຳຕ່າງໆເພື່ອພັດທະນາຈິດໃຈ ແລະ ທັກສະວິຊາຊີບ, ເຊິ່ງຊ່ວຍເສີມສ້າງການຮຽນຮູ້ແບບລວມຕົວ. ສັງລວມແລ້ວ, ຫໍພັກມະຫາວິທະຍາໄລແມ່ນມີຄວາມສຳຄັນທາງດ້ານສິ່ງອຳນວຍຄວາມສະດວກດ້ານຮ່າງກາຍ, ສົ່ງເສີມການພັດທະນາທາງດ້ານສັງຄົມ ແລະ ຈິດໃຈ, ສ້າງຄວາມປອດໄພ ແລະ ສະໜັບສະໜູນການຮຽນ-ການສອນຢ່າງຮອບດ້ານ. ເຫຼົ່ານີ້ແມ່ນປັດໃຈສຳຄັນທີ່ຊ່ວຍໃຫ້ນັກຮຽນມີຄຸນນະພາບຊີວິດທີ່ດີ ແລະ ກຽມພ້ອມສຳລັບຄວາມສຳເລັດທາງວິຊາການ ແລະ ຊີວິດໃນອະນາຄົດ.

ໃນໄລຍະຜ່ານມາເຫັນວ່າ ນັກສຶກສາເຂົ້ານອນໃນຫໍພັກຂອງມະຫາວິທະຍາໄລ ສຸພານຸວົງ ຈຳນວນຫຼາຍພໍສົມຄວນ ໂດຍສະເພາະໃນລະຫວ່າງສົກຮຽນ 2012 ຫາ 2017 ແມ່ນມີຈຳນວນນັກສຶກສາທີ່ເຂົ້າມານອນຫໍພັກ ຫຼາຍກວ່າ 600 ຄົນ ເຊິ່ງບາງປີນັກສຶກສາຈົນລົ້ນຫໍພັກ ຫໍພັກບໍ່ພຽງພໍກັບຄວາມຕ້ອງການຂອງນັກສຶກສາ ແຕ່ໃນທາງກົງກັນຂ້າມນັບຕັ້ງແຕ່ສົກສຶກສາປີ 2018 ເຖິງປະຈຸບັນຈຳນວນນັກສຶກສາທີ່ເຂົ້ານອນຫໍພັກນັກສຶກສາຂອງມະຫາວິທະຍາໄລ ສຸພານຸວົງ ຈຳນວນທັງໝົດ 175 ເຊິ່ງຫຼຸດລົງຈຳນວນຫຼາຍ ມັນອາດເກີດຂຶ້ນຍ້ອນຫຍັງ ແລະ ບັນຫາອັນໃດ ຊຶ່ງມັນຈຳເປັນຕ້ອງໄດ້ສຶກສາ ດັ່ງນັ້ນ ຜູ້ຄົ້ນຄວ້າຈຶ່ງມີຄວາມສົນໃຈສຶກສາ ຄວາມເພິ່ງພໍໃຈຂອງນັກສຶກສາ ຕໍ່ກັບສະພາບການບໍລິຫານ-ຄຸ້ມຄອງຫໍພັກ ມະຫາວິທະຍາໄລ ສຸພານຸວົງ.

## 2. ອຸປະກອນ ແລະ ວິທີການສຶກສາ

ການສຶກສາຄົ້ນຄວ້າໃນຄັ້ງນີ້ເປັນການສຶກສາທາງປະລິມານ ເຊິ່ງເປັນການສຳຫຼວດຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການບໍລິຫານຫໍພັກ ມະຫາວິທະຍາໄລສຸພານຸວົງ.

### 2.1 ກຸ່ມເປົ້າໝາຍຂອງການສຶກສາ

ແມ່ນນັກສຶກສາທີ່ພັກອາໄສຢູ່ພາຍໃນຫໍພັກນັກສຶກສາ ມະຫາວິທະຍາໄລສຸພານຸວົງ ປີ 1-4 ໃນສົກສຶກສາ 2024-2025 ຈຳນວນ 175 ຄົນ, ຍິງ 110 ຄົນ ໂດຍໃຊ້ວິທີແບບກຳນົດກຸ່ມເປົ້າໝາຍ

### 2.2 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

ເຄື່ອງມືທີ່ໃຊ້ໃນການສຶກສາໃນຄັ້ງນີ້ ແມ່ນໃຊ້ແບບສອບຖາມເປັນເຄື່ອງມືຫຼັກ ເຊິ່ງປະກອບມີ 2 ພາກສ່ວນຄື: 1 ກ່ຽວກັບຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ. 2 ກ່ຽວກັບຄວາມເພິ່ງພໍໃຈຕໍ່ກັບການບໍລິຫານ-ຄຸ້ມຄອງຫໍພັກນັກສຶກສາ ມະຫາວິທະຍາໄລ ສຸພານຸ່ງ ໃນ 7 ດ້ານຄື: 1. ດ້ານການບໍລິການ, 2. ດ້ານການບໍລິຫານ, 3. ດ້ານສິ່ງອຳນວຍຄວາມສະດວກພາຍໃນຫໍພັກ, 4. ດ້ານລະບຽບວິໄນ, 5. ດ້ານສະຫວັດດີການ ແລະ ນະໂຍບາຍ, 6. ດ້ານບຸກຄະລາກອນຮັບຜິດຊອບຫໍພັກ, ແລະ 7. ດ້ານກິດຈະກຳພາຍໃນຫໍພັກ. ແລະ ການຕອບແບບສອບຖາມດ້ວຍການໃຫ້ຄະແນນ ວັດລະດັບປະມານຄ່າ 1 ຫາ 5 ຂອງ Likirt scale ( Likirt, 1931). ເຊິ່ງມີເກັນການໃຫ້ຄະແນນ ແຕ່ລະຂໍ້ແບບສອບຖາມດັ່ງນີ້:

- ຄະແນນ 5 ໝາຍເຖິງຄວາມເພິ່ງພໍໃຈຫຼາຍທີ່ສຸດ
- ຄະແນນ 4 ໝາຍເຖິງຄວາມເພິ່ງພໍໃຈຫຼາຍ
- ຄະແນນ3 ໝາຍເຖິງຄວາມເພິ່ງພໍໃຈປານກາງ
- ຄະແນນລ 2 ໝາຍເຖິງຄວາມເພິ່ງພໍໃຈໜ້ອຍ
- ຄະແນນ 1 ໝາຍເຖິງຄວາມເພິ່ງພໍໃຈໜ້ອຍທີ່ສຸດ

❖ **ການສ້າງ ແລະ ກວດສອບຄຸນນະພາບຂອງເຄື່ອງມື**

ໄດ້ສຶກສາແນວຄວາມຄິດ, ທິດສະດີທີ່ກ່ຽວຂ້ອງ ເອກະສານທີ່ກ່ຽວຂ້ອງ ເພື່ອລ່ອນລວມດັດປັບ ມາສ້າງເປັນແບບສອບຖາມ. ຈາກນັ້ນໄດ້ນຳແບບສອບຖາມໄປຜ່ານຜູ້ຊ່ຽວຊານ ຈຳນວນ 3 ທ່ານ ເພື່ອປະເມີນຄວາມສອດຄ່ອງຂອງແຕ່ລະຄຳຖາມ ກັບຈຸດປະສົງຂອງການຄົ້ນຄວ້າ ໂດຍໃຊ້ສູດດັດສະນີຄວາມສອດຄ່ອງ (Index of Item Objective Congruence: IOC): $IOC = \frac{\Sigma R}{N}$

**IOC** ໝາຍເຖິງດັດສະນີຄວາມສອດຄ່ອງຂອງແບບທົດສອບ

**ΣR** ໝາຍເຖິງຜົນລວມຂອງຄະແນນຄວາມຄິດເຫັນຂອງຜູ້ຊ່ຽວຊານແຕ່ລະຄົນ

**N** ໝາຍເຖິງຈຳນວນຜູ້ຊ່ຽວຊານ

ຈາກການປະເມີນຄວາມຊອດຄ່ອງຈາກຜູ້ຊ່ຽວຊານເຫັນວ່າ ແຕ່ລະຂໍ້ຄຳຖາມ ມີຄ່າສະເລ່ຍຢູ່ໃນລະຫວ່າງ 0.6 ຫາ 1.00.

### 2.3 ວິທີການເກັບກຳຂໍ້ມູນ

ຜູ້ວິໄຈໄດ້ເກັບກຳຂໍ້ມູນຈາກກຸ່ມເປົ້າໝາຍໂດຍການແຈກຢາຍແບບສອບຖາມໃຫ້ນັກສຶກສາທີ່ນອນໃນຫໍພັກຈຳນວນ 175 ສະບັບ ພ້ອມທັງອະທິບາຍວິທີການຕອບແບບສອບຖາມໃຫ້ນັກສຶກສາຢ່າງລະອຽດ ເພື່ອລຶກລຽງຄວາມຜິດພາດໃນການສະໜອງຂໍ້ມູນ ຈາກນັ້ນໄດ້ເກັບແບບສອບຖາມຄືນ ເຫັນວ່າສາມາດເກັບແບບສອບຖາມຄືນທັງໝົດ ຈຳນວນ 134 ສະບັບ ກວມ 76.57 % .

### 2.4 ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ

ສະຖິຕິພື້ນຖານທີ່ໃຊ້ໃນການວິໄຈປະກອບມີ:

1). ສູດຊອກຫາຄ່າສະເລ່ຍ $\bar{x} = \frac{\sum fn}{n}$

$\bar{x}$ : ແທນໃຫ້ຄ່າສະເລ່ຍ

$\sum fx$ : ແທນໃຫ້ຜົນບວກຂອງຄະແນນທັງໝົດ

n : ຈຳນວນຄະແນນທັງໝົດ

2). ສູດຊອກຫາຄ່າຜັນປ່ຽນມາດຕາຖານ

$$S.D = \sqrt{\frac{n\sum_{fx}2 - \sum_{(fx)}2}{n(n-1)}}$$

**S.D** : ແມ່ນຄ່າຜັນປ່ຽນມາດຕະຖານ

**n** : ຈຳນວນກຸ່ມຕົວຢ່າງທັງໝົດ

$\sum_{(fx)} 2$ : ຜົນບວກຂອງຜົນຄູນ ລະຫວ່າງ ຄວາມຖີ່ກັບລະດັບຄວາມສຳຄັນ

## 3. ຜົນໄດ້ຮັບຈາກການຄົ້ນຄວ້າ

ຈາກການສຶກສາໃນ 7 ດ້ານ ເຫັນວ່ານັກສຶກສາມີຄວາມເພິ່ງພໍໃຈຕໍ່ກັບສະພາບການບໍລິຫານຫໍພັກ ມະຫາວິທະຍາໄລສຸພານຸວົງ ໃນລະດັບໜ້ອຍຫາປານກາງ ເຊິ່ງສາມາດເຫັນໃດຄວາມແຕກຕ່າງໃນແຕ່ລະດ້ານດັ່ງນີ້: 1. ດ້ານການບໍລິການ ແລະ ສິ່ງອຳນວຍຄວາມສະດວກ ເຫັນວ່າ ນັກສຶກສາມີຄວາມເພິ່ງພໍໃຈໃນລະດັບໜ້ອຍ ຫາ ປານກາງ ໂດຍມີຄ່າສະເລ່ຍລວມຢູ່ທີ່ $\bar{X}$ =2.39 ແລະ ຄ່າ $SD$=1.01 ເນື່ອງຈາກວ່າ ການເບິ່ງແຍງດູແລ ຮັກສາຄວາມປອດໄພ ຍັງບໍ່ໄດ້ດີເທົ່າທີ່ຄວນ, ຄວາມສາມັກຄີປຸ້ມລຸມພາຍໃນຫໍພັກຍັງບໍ່ຍັງບໍ່ທັນໜັກແໜ້ນ ແລະ ເປັນຂຸບວນພໍປານໃດ, ການຈັດສັນບ່ອນຕາກເຄື່ອງນຸ່ງຫົ່ມ ຍັງບໍ່ທັນເໝາະສົມ ແລະ ຍັງບໍ່ຖືກໃຈນັກສຶກສາພໍເທົ່າໃດ ສ່ວນຫຼວງຫຼາຍແລ້ວອາດຈະແມ່ນນັກນັກສາໄດ້ຊອກບ່ອນຕາກເຄື່ອງເອງ ແລະ ຕາມໃຈຊອບຂອງໃຜລາວ, ການຈັດສັນບ່ອນພັກຜ່ອນກະຍັງບໍ່ທັນໄດ້ດີ ຫຼື ຍັງບໍ່ມີບ່ອນສະເພາະເພື່ອການພັກຝ່ອນໃນຫໍພັກ ສ່ວນຫຼາຍນັກສັກສາອາດຈະໄດ້ອາໃສຫ້ອງນອນຂອງຕົນເອງເປັນບ່ອນພັກຜ່ອນເທົ່ານັ້ນ, ການຈັດສັນຫ້ອງນອນ, ຫ້ອງນໍ້າ ແລະ ຖັງຖິ້ມຂີ້ເຫຍື້ອໃນຫໍພັກ ເຫັນວ່ານັກສຶກສາມີຄວາມພໍໃຈໃນລະດັບປານກາງ ເພາະວ່າຫ້ອງນອນນັກສຶກສາຍັງບໍ່ມີຫ້ອງນໍ້າໃນ ສ່ວນຫຼາຍແມ່ນເປັນຫ້ອງນໍ້າລວມ ແລະ ຢູ່ໄກ ການຮັກສາຄວາມສະອາດກະຫຍຸ້ງຍາກ ຫໍພັກຍັງຂາດຜູ້ຮັບຜິດຊອບອານາໄມ ຈຸດຖິ້ມຂີ້ເຫຍື້ອຢູ່ໄກ ຂີ້ເຫື້ອຍັງຖິ້ມຊະຊາຍໜ້າຫໍພັກ, ຄວາມພໍໃຈຕໍ່ກັບການຊ້ອມແປງອຸປະກອນພາຍໃນຫໍຢູ່ໃນລະດັບກາງ ຊຶ່ງສັງເກດເຫັນວ່າການການສ້ອມແປງອຸປະກອນທີ່ເປ່ເພໃນຫໍພັກຍັງຊັກຊ້າ ແລະ ຜ່ານຫຼາຍຂັ້ນຕອນ, ຄວາມພໍໃຈຕໍ່ກັບການປະຖົມພະຍາບານ ແລະ ລະບົບໄຟຟ້ານໍ້າປາປາແມ່ນຢູ່ໃນລະດັບໜ້ອຍ ເນື່ອງຈາກວ່າຫໍພັກຍັງບໍ່ມີພະນັກງານແພດປະຈຳ 24 ຊົ່ວໂມງ ແລະ ອຸປະກອນການຢາກະຍັງບໍ່ຄົບຖວນ ແລະ ທັນສະໃໝ, ເຄື່ອງໃຊ້ໄຟຟ້າໃນຫໍພັກມັກເປ່ເພ ໄຟຟ້າມັກດັບ ນໍ້າປາປາມັກບໍ່ອອກ ເຊິ່ງບໍ່ສະດວກໃນການດຳລົງຊີວິດໃນຫໍພັກ (ຕາຕະລາງ 1).

ຄວາມເພິ່ງພໍໃຈຕໍ່ກັບການບໍລິຫານ-ຄຸ້ມຄອງ ຫໍພັກນັກສຶກສາແມ່ນຢູ່ໃນລະດັບໜ້ອຍໂດຍມີຄ່າສະເລ່ຍລວມ $\bar{X}$ =2.**21**; ແລະ ຄ່າຜັນປ່ຽນມາດຕະຖານ **SD = 0**.92, ການຈັດສັນລະບົບລະບາຍນໍ້າ ແລະ ການຮັກສາອະນາໄມໃນຫໍພັກຍັງບໍ່ໄດ້ດີ ເຊັ້ນຍາມຝົນ ເຮັດໃຫ້ນໍ້າຂັງ ແລະ ຄ້າງ ຮ່ອງນໍ້າເສຍຕັນ ການຄຸ້ມຄອງການອານາໄມໃນຫໍພັກຍັງບໍ່ໄດ້ດີ ມີຂີ້ເຫຍື້ອຊະຊາຍ ຖິ້ມບໍ່ເປັນຈຸດ ແລະ ບໍ່ເອົາໄປຖິ້ມໃສ່ຖັງຂີ້ເຫຍື້ອ ສິ່ງກິ່ນເໝັນ, ການການຈັດສັນລະບົບລະບາຍອາກາດພາຍໃນຫໍພັກຍັງບໍ່ທັນໄດ້ດີ ຫ້ອງນອນອັບ ອາກາດບໍ່ລ່ວງ ເຄື່ອງດູດອາການກະເປ່ເພ, ອຸປະກອນປ້ອງກັນອັກຄີໄພພາຍໃນອາຄານຫໍພັກຍັງມີໜ້ອຍ ແລະ ຫຼາຍຈຸດຍັງບໍ່ທັນມີ ຖ້າເກີດກໍລະນາອັກຄີໄພເກີດຂຶ້ນ ແມ່ນເຄື່ອງມືອາດຈະບໍ່ພຽງພໍໃນການຄວາມຄຸມໄດ້ (ຕາຕະລາງ 2).

ຄວາມເພິ່ງພໍໃຈຕໍ່ລະບຽບວິໄນ ໃນຫໍພັກນັກສຶກສາ ເຫັນວ່າ ຢູ່ໃນລະດັບປານກາງໂດຍມີຄ່າສະເລ່ຍລວມ $\bar{X}$ =2.62; ແລະ ຄ່າຜັນປ່ຽນມາດຕະຖານ **SD = 1**.21, ນັກສຶກສາມີຄວາມເຂົ້າໃຈກົດລະບຽບຂອງຫໍພັກ, ນັກສຶກສາເຂົ້າຮ່ວມຝຶກອົບຮົມກ່ຽວກັບລະບຽບຫໍພັກ, ນັກສຶກສາພໍໃຈກ່ຽວກັບການຈັດການຫໍພັກ, ລະບຽບໃນການເຂົ້າ ອອກຫໍພັກ, ແລະ ລະບຽບມາດຕະການຮັບມືກັບເຫດການສຸກເສີນ (ຕາຕະລາງ 3).

ຄວາມເພິ່ງພໍໃຈຕໍ່ກັບດ້ານສະຫວັດດີການສັງຄົມ ແລະ ນະໂຍບາຍຫໍພັກນັກສຶກສາ ເຫັນວ່າຢູ່ໃນລະດັບ ໜ້ອຍ ຫາ ປານກາງ ເຊິ່ງມີຄ່າ ສະເລ່ຍລວມ $\bar{X}$ =2.49; ແລະ ຄ່າຜັນປ່ຽນມາດຕະຖານ **SD = 1**.10, ການບໍລິການປະຖົມພະຍາບານອາດຈະຍັງບໍ່ຄົບຖ້ວນພຽງພໍ ແລະ ບໍ່ທັນການ, ການເກັບຄ່າຫໍພັກມີຄວາມພໍໃຈໃນລະດັບປານກາງ, ການຕິດຕໍ່ຮັບຢາຈາກຜູ້ຮັບຜິດຊອບຫໍພັກຍັງມີຄວາມຫຍຸ້ງຍາກ ແລະ ບໍ່ທັນການໂດຍສະເພາະແມ່ນຕອນກາງຄືນ ເຊິ່ງບໍ່ມີແພດປະຈຳຫໍພັກ, ຢາອາກຍັງມີໜ້ອຍ ແລະ ມີພຽງບາງສະນິດເທົ່ານັ້ນ ເຊິ່ງບໍ່ສາມາດຕອບສະໜອງກັບຄວາມຕ້ອງການຂອງນັກສຶກໄດ້ຕາມຕ້ອງການ, ການເກັບກຳຜົນງານນັກສຶກສາຍັງບໍ່ທັນທົ່ວເຖິງ ແລະ ຄົບຖ້ວນ ເຮັດໃຫ້ການຍ້ອງຍໍນັກສຶກສາຫໍພັກຜູ້ທີ່ມີຜົນງານດີເດັ່ນມີຂໍ້ຜິດພາດ ມີຜູ້ໄດ້ ແລະ ຜູ້ບໍ່ໄດ້ແຕກຕ່າງກັນ, ການປະຕິບັດສະຫວັດດີການໃຫ້ກັບນັກສຶກສາຫໍພັກອາດຍັງບໍ່ໄດ້ດີເທົ່າທີ່ຄວນ (ຕາຕະລາງ 4).

ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບບຸກຄະລາກອນ ຮັບຜິດຊອບຫໍພັກເຫັນວ່າຢູ່ໃນລະດັບປານກາງ ເຊິ່ງມີຄ່າ ສະເລ່ຍລວມ $\bar{X}$ =2.54; ແລະ ຄ່າຜັນປ່ຽນມາດຕະຖານ **SD = 1**.00, ບຸກຄະລາກອນມີຄວາມຮູ້ ແລະ ສາມາດໃຫ້ຄຳປຶກສາແກ່ນັກສຶກສາໄດ້ດີພໍສົມຄວນ, ມີຄວາມສາມາດແກ້ໄຂບັນຫາໃຫ້ນັກສຶກສາຕາມການສະເໜີ ແລະ ເປັນຂົວຕໍ່ຫາພາກສ່ວນທີ່ກ່ຽວຂ້ອງໄດ້ດີພໍສົມຄວນ, ຄວາມເປັນໜ້າເຊື່ອຂອງບຸກຄະລາກອນແມ່ນຍັງໜ້ອຍ, ການຕິດຕໍ່ພົວພົວພໍປານກາງ, ການປະຕິບັດລະບຽບໃນການເຂົ້າ-ອອກຫໍພັກຍັງພໍປານກາງ, ມະນຸດສຳພັນຂອງບຸກຄະລາກອນຍັງພໍປານກາງ ແລະ ການໄກ້ຊິດຕິດແທດກັບນັກສຶກສາແມັນຢູ່ໃນລະດັບໜ້ອຍ (ຕາຕະລາງ 5).

ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບກິດຈະກຳພາຍໃນຫໍພັກ ເຫັນວ່າຢູ່ໃນລະດັບປານກາງ ເຊິ່ງຄ່າສະເລ່ຍລວມ $\bar{X}$ =2.58; ແລະ ຄ່າຜັນປ່ຽນມາດຕະຖານ **SD = 1**.06, ໃນນີ້ກິດຈະກຳທີ່ຈັດຂຶ້ນເຮັດໃຫ້ເກີດມີຄວາມສາມັກຄີກັບໝູ່ເພືອນແມ່ນຢູ່ໃນລະດັບປານກາງ, ກິດຈະກຳທີ່ຈັດຂຶ້ນຊ່ວຍພັດທະນາບຸກຄະລິກະພາບຂອງນັກສຶກສາ ຢູ່ໃນລະດັບປານກາງ, ຊ່ວຍນັກສຶກສາມີຄວາມຮັບຜິດຊອບຕໍ່ສ່ວນລວມຫຼາຍຂຶ້ນ ແມນຢູ່ໃນລະດັບປານກາງ, ຮູບແບບຂອງກິດຈະກຳຫໍພັກມີຄວາມຫຼາກຫຼາຍແລະໜ້າສົນໃຈຢູ່ໃນລະດັບໜ້ອຍ, ການປະຖົມນິເທດນັກສຶກສາຫໍພັກເຂົ້າໃໝ່ມີຄວາມເໝາະສົມຢູ່ໃນລະດັບປານກາງ, ແລະ ຈຳນວນຊົ່ວໂມງໃນການຈັດກິດຈະກຳ ຢູ່ໃນລະດັບໜ້ອຍ (ຕາຕະລາງ 6).

## 4. ວິພາກຜົນ

ນັກສຶກສາພາຍໃນມະຫາວິທະຍາໄລ ສຸພານຸວົງ ມີຄວາມເພິ່ງພໍໃຈຕໍ່ກັບການບໍລິການ ແລະ ສິ່ງອຳນວຍຄວາມສະດວກໃນຫໍພັກນັກສຶກສາຢູ່ໃນລະດັບໜ້ອຍ ເພາະສະນັ້ນ ຈິ່ງສັ່ງເກດເຫັນໄດ້ວ່າຈຳນວນນັກສຶກສານທີ່ອອກໄປເຊົ່າຫ້ອງແຖວຢູ່ນອກນຳນວນຫຼາຍ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າທີ່ຜ່ານມາ ພວກຂາພະເຈົ້າພົບວ່ານັກສຶກສາມີຄວາມພໍໃຈຕໍ່ກັບການໃຫ້ບໍລິການ ຂອງ ມະຫາວິທະຍາໄລ ສຸພານຸວົງ ໂດຍລວມແມ່ນຢູ່ໃນລະດັບຫນ້ອຍຫາປານກາງເທົ່ານັ້ນ (**Inthavong et al., 2025**). ແຕ່ຜົນການສຶກສາດັ່ງກ່າວນີ້ພັດ

ກົງກັນຂ້າມກັບການຄົ້ນຄວ້າຂອງ ພູນສະຫວັນ (2014) ພົບວ່າ ການຄຸ້ມຄອງຫໍພັກນັກສຶກສາມະຫາວິທະຍາ ໄລ ແມ່ຟ້າຫຼວງ, ແຂວງຊຽງຣາຍ ຕໍ່ກັບສິ່ງອຳນວຍຄວາມສະດວກໂດຍ ລວມພາຍໃນຫໍພັກມັນພຽງພໍ ແລະ ເຫມາະສົມໃນລະດັບທີ່ຕອບສະຫນອງຄວາມຕ້ອງການຂອງນັກ ຮຽນ ພະນັກງານຫໍພັກ ເຊິ່ງແນ່ນອນມັນອາດຈະສ້າງຄວາມເພິ່ງພໍໃຈໃຫ້ກັບນັກຮຽນ ແລະ ອາຈານ ທີ່ອາໃສຢູ່ໃນຫໍພັກໃນລະດັບຫຼາຍ. ແລະ ແຕກຕ່າງຈາກຜົນການສຶກສາຂອງ **Chantachit (2019)** ພົບວ່າ ນັກສຶກສາມີຄວາມເພິ່ງພໍໃຈຕໍ່ກັບຫໍພັກນັກສຶກສາມະຫາວິທະຍາໄລເຕັກໂນໂລຢີຣາຊມົງຄົນສີວິໄຊ ວິທະຍາເຂດຕັງ ໂດຍພາບລວມຢູ່ໃນລະດັບສູງທີ່ສຸດ. ພ້ອມນີ້ ບົວແກ້ວ (2017) ຍັງພົບອີກວ່າ ນັກສຶກສາມີຄວາມເພິ່ງພໍໃຈຕໍ່ກັບການໃຫ້ບໍລິການດ້ານການຈັດການນັກສຶກສາ ມະຫາວິທະຍາໄລ ລາມຄຳແຫງ ໂດຍພາບລວມແມ່ນຢູ່ໃນລະດັບຫຼາຍ; ຊຸນສັກ (2011) ຍັງພົບອີກວ່າ ນັກສຶກສາມີຄວາມຕ້ອງການດ້ານການບໍລິການທົ່ວໄປ ແມ່ນຢູ່ໃນລະດັບຫຼາຍ ໂດຍສະເພາະ ຮ້ານຂາຍເຄື່ອງຊຳພາລະ ມິນິມາກ ຫ້ອງຄອມພິວເຕີ້ ພ້ອມລະບົບອິນເຕີເນັດ ແລະ ສຸຂະວັນນະ (2020) ກໍ່ພົບວ່າ ນັກສຶກສາມີຄວາມເພິ່ງພໍໃຈຫຼາຍຕໍ່ກັບການບໍລິຫານຈັດການຫໍພັກໃນຊ່ວງໂຄວິດ 19 ອີກດ້ວຍ. ນອກຈາກນີ້ນັກສຶກສາມີຄວາມເພິ່ງພໍໃຈຕໍ່ກັບການບໍລິຫານຫໍພັກນັກສຶກສາມະຫາວິທະຍາໄລສຸພານຸວົງຢູ່ໃນລະດັບໜ້ອຍ ໂດຍສະເພາະ ການຈັດສັນລະບົບລະບາຍນໍ້າ ແລະ ການຮັກສາອະນາໄມໃນຫໍພັກ, ການຄຸ້ມຄອງການອານາໄມໃນຫໍພັກ, ການຈັດສັນລະບົບລະບາຍອາກາດພາຍໃນຫໍພັກ, ອຸປະກອນປ້ອງກັນອັກຄີໄພພາຍໃນອາຄານຫໍພັກ ເຊິ່ງນັກສຶກສາອາດເຫັນວ່າບຍັງບໍ່ທັນເໝາະສົມ ແລະ ເກີດຄວາມບໍ່ເພິ່ງພໍໃຈຫຼາຍຕໍ່ກັບບັນກາດັ່ງກ່າວນີ້. ເຊິ່ງແຕກຕ່າງຈາກຜົນການຄົ້ນຄວ້າຂອງ Gongtan et al. (2019) ພົບວ່າ ຮ້ອຍລະ 71.4 ໂດຍມີຄວາມພຶງພໍໃຈໃນການພັກອາໄສຢູ່ໃນຫໍພັກຂອງມະຫາວິທະຍາໄລລັດຊະພັດເພັດບູນ ປະເທດໄທ. ແຕ່ຜົນການສຶກສາສອດຄ່ອງການບົດຄົ້ນຄວ້າຂອງ Altinay et al. (2024) ພົບວ່າ ແສງສະຫວ່າງໃນຫໍພັກບໍ່ພຽງພໍ ແລະ ການລະບາຍອາກາດບໍ່ດີເທົ່າທີ່ຄວາມ ແລະ ຍັງພົບວ່າ ຫໍພັກຍັງບົກຜ່ອງດ້ານສຸຂະອະນາໄມ ເຊິ່ງສິ່ງຜົນກະທົບໃຫ້ແກ່ນັກຮຽນທາງບໍ່ເພິ່ງປະສົງ.

ໃນດ້ານລະບຽບວິໄນໃນຫໍພັກມະຫາວິທະຍາໄລ ສຸພານຸວົງ ນັກສຶກສາມີຄວາມພໍໃຈໃນລະດັບປານກາງ ຊຶ່ງນັກສຶກສາມີຄວາມເຂົ້າໃຈກົດລະບຽບຂອງຫໍພັກໂດຍລວມໆ, ນັກສຶກສາໄດ້ເຂົ້າຮ່ວມຝຶກອົບຮົມກ່ຽວກັບລະບຽບຫໍພັກເປັນປະຈຳແຕ່ລະສົກຮຽນ ໂດຍສະເພາະແມ່ນລະບຽບໃນການເຂົ້າອອກຫໍພັກ, ແລະ ລະບຽບມາດຕະການຮັບມືກັບເຫດການສຸກເສີນ ເຊັ່ນ ການຝຶກລະບຽບວິທີການຕ້ານອັກຄີໄພ.

ໃນດ້ານສະຫວັດດີການ ແລະ ນະໂຍບາຍໃນຫໍພັກ ນັກສຶກສາມີຄວາມພໍໃຈໃນລະດັບໜ້ອຍຫາປານກາງເທົ່ານັ້ນ ເຊິ່ງເຫັນໄດ້ວ່າ ເຊິ່ງສອດຄ່ອງກັບຜົນການວິໄຈຂອງ ໄໝທອງ (2011) ພົບວ່າຄຸນນະພາບການບໍລິການຂອງວຽກງານສະຫວັດດີການນັກສຶກສາໃນຫໍພັກມະຫາວິທະຍາໄລບູລະ ພາ ວິທະຍາເຂດຈັນທະບູລີ ໂດຍລວມແລ້ວແມ່ນຢູ່ໃນລະດັບປານກາງ ແລະ ຄຸນນະພາບການບໍລິການຂອງສະຫວັດດີການ ລະຫວ່າງເພດ ຄ່າໃຊ້ຈ່າຍປະຈຳເດືອນທັງໝົດ ແມ່ນມີຄວາມແຕກຕ່າງກັນຢ່າງມີໄລຍະສຳຄັນທາງສະຖິຕິ 0.05.

ໃນດ້ານບຸກຄະລາກອນຄະນະຮັບຜິດຊອບຫໍພັກ ແມ່ນນັກສຶກສາມີຄວາມພໍໃຈໃນລະດັບປານກາງ ຊຶ່ງຜົນການຄົ້ນຄວ້າຄ້ອນຂ້າງແຕກຕ່າງຈາກຜົນການສຶກສາຢູ່ຕ່າງປະເທດເພື່ອນບ້ານເຊັ່ນວ່າ ບົດຄົ້ນຄວ້າຂອງ ປະຍຸດສອນ (2007) ສຶກສາ ຄວາມພໍໃຈຂອງນັກສຶກສາມະຫາວິທະຍາໄລ ວິຈິດສິນ, ວິທະຍາເຂດ ສະໜາມຫຼວງ ໃນການບໍລິການຫໍພັກຂອງສະຖາບັນ ພົບວ່າຜູ້ຕອບແບບສອບຖາມ ມີຄວາມພໍໃຈໃນລະດັບສູງກ່ຽວກັບຄວາມໜ້າເຊື່ອຖື ແລະ ຄວາມເຊື່ອໝັ້ນຂອງພະນັກງານຫໍພັກ ການທຳຄວາມສະອາດຂອງແມ່ບ້ານ ແຕ່ໃນດ້ານອຸປະກອນທີ່ສະຫນອງໃຫ້ ແລະ ສະພາບຂອງຕູ້ເສື້ອຜ້າຂອງນັກສຶກສາເຫັນວ່ານັກສຶກສາ ທຸກລະດັບປີ ມີຄວາມພໍໃຈໃນລະດັບຕໍ່າໝາຍຄວາມວ່າ ມີບາງດ້ານຜົນການສຶກສາອອກມາຄ້າຍໆກັນ ແຕ່ໃນບາງດ້ານ ຜົນການສຶກສາມັນແຕກຕ່າງກັນ ແລະ ແນ່ນອນ ທຸກຢ່າງມັນອາດຈະຂຶ້ນກັບຄວາມທັນສະໄໝ ຄວາມເກົ່າແກ່ປະສົບການ ແລະ ນະໂຍບາຍ ຂອງແຕ່ລະມະຫາວິທະຍາໄລໃນປະເທດຕ່າງໆ ທີ່ແຕກຕ່າງກັນ.

ສ່ວນກິດຈະກຳໃນຫໍພັກ ມະຫາວິທະຍາໄລ ສຸພານຸວົງ ນັກສຶກສາມີຄວາມພໍໃຈຍັງຢູ່ໃນລະດັບປານກາງ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ ຕັ້ງພັດທະນາ (2017) ພົບວ່າກິດຈະກຳພາຍໃນຫໍພັກມະຫາວິທະຍາໄລທຳມະສາດ ສູນລັງສິດ ນັກສຶກສາເຫັນວ່າຍັງ ມີຄວາມເໝາະສົມໃນລະດັບໜ້ອຍ ໝາຍຄວາມວ່ານັກສຶກສາບໍ່ຄ່ອຍພໍໃຈກັບກິດຈະກຳດັ່ງກ່າວໃນຫໍພັກ ສຳລັບນັກສຶກສາໃນມະຫາວິທະຍາໄລ ສຸພານຸວົງ ຈຳນວນຫຼາຍແມ່ນໃຊ້ເວລາຫວ່າງໄປເຮັດວຽກຢູ່ນອກ ເພື່ອຫາເງິນໃຊ້ຈ່າຍໃນການຮຽນຂອງຕົນເອງ ສະນັ້ນເມື່ອງເຮັດວຽກມາເມື່ອຍແລ້ວ ຖ້າຫາກຫໍພັກມີກິດຈະກຳຈະເຮັດໃຫ້ນັກສຶກສາບໍ່ຄ່ອຍຍາກພໍໃຈເຂົ້າຮ່ວມ.

**5. ສະຫຼຸບຜົນການຄົ້ນຄວ້າ**

ຈາກຜົນການຄົ້ນຄວ້າພົບວ່າ ສະຫຼຸບລວມແລ້ວ ນັກສຶກສາມະຫາວິທະຍາໄລ ສຸພານຸວົງມີຄວາມເພິ່ງພໍໃຈຕໍ່ກັບການບໍລິຫານຄ້ອມຄອງຫາພັກ ແມ່ນ ຢູ່ໃນລະດັບໜ້ອຍ ຫາ ປານກາງ ບໍ່ວ່າຈະເປັນດ້ານການບໍລິການ ແລະ ສິ່ງອຳນວຍຄວາມສະດວກໃນຫໍພັກ, ດ້ານການບໍລິຫານຈັດການຫໍພັກ, ດ້ານບຸກຄະລາກອນຄະນະຄຸ້ມຄອງຫໍພັກ, ດ້ານສະຫວັດດີການ ແລະ ນະໂຍບາຍ, ດ້ານກິດຈະກຳໃນຫໍພັກ, ດ້ານລະບຽບວິໃນ ຕ່າງໆ ເຊິ່ງບັນຫາດັ່ງກ່າວນີ້ແມ່ນມັນສະແດງໃຫ້ເຫັນວ່າມະຫາວິທະຍາໄລ ສຸພານຸວົງ ຈະຕ້ອງໄດ້ມີການປັບປຸງລະບົບການຄຸ້ມຄອງຫໍພັກ ໃຫ້ມີຄວາມເໝາະສົມ ເປັນຕາໜ້າຢູ່ ແລະ ສອດຄ່ອງຕາມສະພາບຄວາມເປັນຈິງໃນແຕ່ລະຍຸກສະໃໝ ໂດຍສະເພາະການສ້າງສິ່ງອຳນວຍຄວາມສະດວກໃນຫໍພັກເຊັ່ນວ່າ ຕິດຕັ້ງໄວຟາຍໃຫ້ນັກສຶກສາສາມາດເຊື່ອມອິນເຕີເນັດໃດ້ ມີຫ້ອງນໍ້າໃນຫ້ອງນອນ ມີການຄຸ້ມຄອງຄວາມສະອາດເປັນຢ່າງດີ ແລະ ສິ່ງອຳນວຍຄວາມສະດວກອື່ນໆ ພ້ອມທັງພັດທະນາໃຫ້ຫໍພັກມີຄວາມພ້ອມ ແລະ ສາມາດຮັບຮອງນັກສຶກສາຕ່າງປະເທດໃດ້.

ເຖິງຢ່າງໃດກໍ່ຕາມ ວຽກງານການຄຸ້ມຄອງຫໍພັກ ຈະເດີນແມ່ນແລ່ນສະດວກ ແລະ ວ່ອງໄວ ສາມາດແກ້ໄຂທັນກັບສະພາບການ ເຊິ່ງປາສະຈາກບໍ່ໄດ້ ແຜນພັດທະນາ, ງົບປະມານ, ການຊີ້ນຳນຳພາ, ຍຸດທະສາດ ແລະ ນະໂຍບາຍຈາກຂັ້ນເທິງ ຈຶ່ງຈະເຮັດໃຫ້ ທຸກວຽກງານປະສົບຜົນສຳເລັດດ້ວຍດີ.

## 6. ຂໍ້ຄັດແຍ້ງ

ພວກຂ້າພະເຈົ້າໃນນາມທີມງານຜູ້ຄົ້ນຄວ້າວິທະຍາສາດ ໃນຄັ້ງນີ້ຂໍປະຕິຍານຕົນວ່າຂໍ້ມູນທັງຫມົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດແລະບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນຫນຶ່ງ, ກໍລະນີມີການລະເມີດໃນຮູບການໃດຫນຶ່ງພວກຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຝ່າຍດຽວ.

## 7. ເອກະສານອ້າງອີງ


ຊຸນສັກ, ພ. (2011). ສຶກສາຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການບໍລິການຂອງຫໍພັກນັກສຶກສາມະຫາວິທະຍາໄລເຕັກໂນໂລຊີຊາຊະມົງຄົນ ຊິນບູຣີ, ຂໍ້ມູນຈາກ: http://www.research.rmutt.ac.th/wp-content/uploads/2011/06/IS_114870502010-1.pdf

ບົວແກ້ວ, ນ. (2017). ຄວາມເພິ່ງພໍໃຈຂອງນັກສຶກສາທີ່ມີຕໍ່ການບໍລິການດ້ານການຈັດການນັກສຶກສາ ມະຫາວິທະຍາໄລລາມຄໍາແຫງ ສາຂາວິຊາການ ແຂວງສຸລິນ, ຂໍ້ມູນຈາກ: http://www.edu-journal.ru.ac.th/AbstractPdf/2560-2-13_1512545435_surin_025.pdf

ປະຍຸດສອນ, ສ. (2007). ສຶກສາ ຄວາມພໍໃຈຂອງນັກສຶກສາ ມະຫາວິທະຍາໄລ ວິຈິດສິນ, ວິທະຍາເຂດ ສະໜາມຫຼວງ ເພື່ອໃຫ້ບໍລິການຫໍພັກຂອງສະຖາບັນ. *ມະຫາວິທະຍາໄລວິຈິດສິນ, ວິທະຍາເຂດ ສະໜາມຫຼວງ.*

ໄໝທອງ, ນ. (2011). ການສຶກສາຄຸນນະພາບການບໍລິການຂອງວຽກງານສະຫວັດດີການຫໍພັກນັກສຶກສາ ມະຫາວິທະຍາໄລບູລະພາ ວິທະຍາເຂດ ຈັນທະບູລີ. *ວິທະຍານິພົນການສຶກສາມະຫາບັນດິດ ສາຂາວິຊາ ການບໍລິຫານການສຶກສາ ຄະນະສຶກສາສາດມະຫາວິທະຍາໄລ ບູລະພາ.*

ມະຫາວິທະຍາໄລ ສຸພານຸວົງ. (2021). *ແຜນຍຸດທະສາດການພັດທະນາການສຶກສາຂອງມະຫາວິທະຍາໄລສຸພານຸວົງ ໄລຍະ 2021-2025*

ມະຫາວິທະຍາໄລ ສຸພານຸວົງ. (2025). *ບົດລາຍງານກອງປະຊຸມປະຈໍາປີ 2025 ຂອງມະຫາວິທະຍາໄລສຸພານຸວົງ.*

ພູນສຸວັນ, ລ. (2014). ການຄຸ້ມຄອງຫໍພັກນັກສຶກສາ ມະຫາວິທະຍາໄລແມ່ຟ້າຫຼວງ ແຂວງ ຊຽງຣາຍ ຕາມທັດສະນະຂອງກໍາມະການນັກສຶກສາຫໍພັກ ແລະ ນັກສຶກສາພາຍໃນຫໍພັກ. *ມະຫາວິທະຍາໄລແມ່ຟ້າຫຼວງ ແຂວງ ຊຽງຣາຍ.*

ຕັ້ງພັດທະນາ, ຄ. (2017). ສຶກສາຄວາມຄິດເຫັນຂອງນັກສຶກສາຕໍ່ການຈັດການຫໍພັກນັກສຶກສາມະຫາ ວິທະຍາໄລທໍາມະສາດ ສູນລັງສິດ. *ມະຫາວິທະຍາໄລທໍາມະສາດ ສູນລັງສິດ* .

ສຸຂະວັນນະ, ຣ. (2020). *ຄວາມເພິ່ງພໍໃຈຕໍ່ມາດຕາການການບໍລິຫານຈັດການຫໍພັກພາຍໃນມະຫາວິທະຍາໄລໃນຊ່ວງສະຖານະການໂຄວິດ-19 ຂອງນັກສຶກສາມະຫາວິທະຍາໄລ ສິນລະປະກອນ ວິທະຍາເຂດພະລາດຊະວັງ ສະໜາມໄຊ* [ບົດວິທະຍານິພົນ], ມະຫາວິທະຍາໄລ ສິນລະປະກອນ ວິທະຍາເຂດພະລາດຊະວັງ ສະໜາມໄຊ

Altinay, Z., Arslan, R. U., & Sharma, R. C. (2024). Assessing Student Satisfaction and Institutional Efficiency in Dormitory Management: A Qualitative Analysis Based on Student Perspectives. *Sustainability, 16*(8823). https://doi.org/10.3390/su16208823

Chanakun, k., Nirattisai, N., & Kampangkeaw.N. (2022). Students' Satisfaction in Using the Dormitory Service of Mahamakut Buddhist University, Nakhon Pathom Province, *Journal of Mani Chettha Ram Wat Chommani 5*(2),01-33.

Chantachit, N. (2019). Tertiary Students' Satisfaction toward the Dormitory Service at Rajamangala University of Technology Srivijaya, Trang Campus, 01-12. Retrieved from: http://www.ba-abstract.ru.ac.th/AbstractPdf/2562-5-11_1599048411.pdf

Gongtan, p., Ungjaroen, O., Sriburin, S., Kitjarak, T., boonrad, C., &Kitjarak, T. (2019). *Students' Satisfaction toward Male Dormitory, Phetchabun Rajabhat University Academic Year 2019*, The 16th National Academic Conference, Kasetsart University, Kamphaeng Saen Campus, December 3–4, 2019." Retrieved from: file:///D:/Dowloads/KRKPS000S0001192c1.pdf

Inthavong, V., Anolac, V., Souliya, T., Chittavone, C., & Sisombath, S. (2025). Student Satisfaction of the Services Improvement Providing by Souphanouvong University in the Academic year 2023 – 2024. *Souphanouvong University Journal Multidisciplinary Research and Development*, *10*(Special Issue), 96–100. https://doi.org/10.69692/SUJMRD10special96

Likert, R. (1932). A Technique for the Measurement of Attitudes. *Psychology, 140,* 5–55.

ຕາຕາລາງທີ 1 ຄວາມເພິ່ງພໍໃຈຕໍ່ກັບການບໍລິການ ແລະ ສິ່ງອໍານວຍຄວາມສະດວກໃນຫໍພັກນັກສຶກສາ

| | ດ້ານການບໍລິການຫໍພັກນັກສຶກສາ | $\bar{X}$ | SD | ລະດັບຄວາມເພິ່ງພໍໃຈ |
|---|---|---|---|---|
| 1. | ນັກສຶກສາໄດ້ຮັບການເບິ່ງແຍງດູແລ, ຮັກສາຄວາມປອດໄພ | 2.50 | 0.96 | ໜ້ອຍ |
| 2. | ການສ້າງຄວາມສາມັກຄີພາຍໃນຫໍພັກ | 2.26 | 0.94 | ໜ້ອຍ |
| 3. | ການຈັດສັນບ່ອນຕາກເຄື່ອງນຸ່ງຂອງນັກສຶກສາໃນຫໍພັກ | 2.50 | 1.18 | ໜ້ອຍ |
| 4. | ການຈັດສັນບ່ອນພັກຜ່ອນໃນຫໍພັກ | 2.53 | 1.03 | ໜ້ອຍ |
| 5. | ການຈັດສັນຫ້ອງນອນ, ຫ້ອງນໍ້າ ແລະ ຖັງໃສ່ຂີ້ເຫຍື້ອໃນຫໍພັກ | 2.75 | 1.13 | ປານກາງ |
| 6. | ການຊ່ອມແປງອຸປະກອນພາຍໃນຫໍພັກທ່ວງທັນກັບເວລາ | 2.62 | 1.21 | ປານກາງ |
| 7. | ການບໍລິການປະຖົມພະຍາບານຂັ້ນພື້ນຖານໃນຫໍພັກ | 2.38 | 0.98 | ໜ້ອຍ |
| 8. | ການປະຊາສໍາພັນຂໍ້ມູນຂ່າວສານມີຄວາມທັນສະໄໝ | 2.49 | 0.97 | ໜ້ອຍ |
| 9. | ປະສິດທິພາບລະບົບໄຟຟ້າ ແລະ ນໍ້າປະປາ | 1.72 | 0.83 | ໜ້ອຍ |
| 10. | ສິ່ງອໍານວຍຄວາມສະດວກໃນຫໍພັກ | 2.16 | 0.93 | ໜ້ອຍ |
| | **ລວມ** | 2.39 | 1.01 | **ໜ້ອຍ** |

ຕາຕາລາງທີ 2 ຄວາມເພິ່ງພໍໃຈຕໍ່ກັບການບໍລິຫານ-ຄຸ້ມຄອງ ຫໍພັກນັກສຶກສາ

| | ດ້ານການບໍລິຫານຫໍພັກນັກສຶກສາ | $\bar{X}$ | SD | ລະດັບຄວາມເພິ່ງພໍໃຈ |
|---|---|---|---|---|
| 1. | ລະບົບລະບາຍນໍ້າ ແລະ ຮັກສາອະນາໄມໃນຫໍພັກ | 1.98 | 0.89 | ໜ້ອຍ |
| 2. | ການຈັດສັນລະບົບລະບາຍອາກາດພາຍໃນຫໍພັກ | 2.49 | 0.95 | ໜ້ອຍ |
| 3. | ອຸປະກອນປ້ອງກັນອັກຄີໄພພາຍໃນອາຄານຫໍພັກ | 2.19 | 1.01 | ໜ້ອຍ |
| 4. | ລະບົບການຈັດການຂີ້ເຫຍື້ອໃນຫໍພັກ | 2.19 | 0.85 | ໜ້ອຍ |
| | **ລວມ** | 2.21 | 0.92 | **ໜ້ອຍ** |

ຕາຕາລາງທີ 3 ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບດ້ານລະບຽບວິໄນຫໍພັກນັກ ສຶກສາ

| | ດ້ານລະບຽບວິໄນຫໍພັກນັກສຶກສາ | $\bar{X}$ | SD | ຄວາມເພິ່ງພໍໃຈ |
|---|---|---|---|---|
| 1. | ນັກສຶກສາມີຄວາມເຂົ້າໃຈກົດລະບຽບຂອງຫໍພັກ | 3.16 | 1.08 | ປານກາງ |
| 2. | ນັກສຶກສາເຂົ້າຮ່ວມຝຶກອົບຮົມກ່ຽວກັບລະບຽບຫໍພັກ | 2.90 | 1.17 | ປານກາງ |
| 3. | ນັກສຶກສາພໍໃຈກ່ຽວກັບການຈັດການຫໍພັກ | 2.71 | 0.97 | ປານກາງ |
| 4. | ລະບຽບໃນການເຂົ້າອອກຫໍພັກ | 2.75 | 1.13 | ປານກາງ |
| 5. | ລະບຽບມາດຕະການຮັບມືກັບເຫດການສຸກເສີນ | 2.62 | 1.21 | ປານກາງ |
| | **ລວມ** | **2.82** | **1.11** | **ປານກາງ** |

ຕາຕາລາງທີ 4 ຄວາມເພິ່ງພໍໃຈຕໍ່ກັບດ້ານສະຫວັດດີການ ແລະ ນະໂຍບາຍຫໍພັກນັກສຶກສາ

| | ດ້ານສະຫວັດດີການ ແລະ ນະໂຍບາຍຫໍພັກນັກສຶກສາ | $\bar{X}$ | SD | ຄວາມເພິ່ງພໍໃຈ |
|---|---|---|---|---|
| 1. | ການບໍລິການປະຖົມພະຍາບານມີຄວາມເໝາະສົມ | 2.52 | 1.15 | ປານກາງ |
| 2. | ການເກັບຄ່າຫໍພັກ | 2.72 | 1.04 | ປານກາງ |
| 3. | ການຕິດຕໍ່ຮັບຢາຈາກຜູ້ຮັບຜິດຊອບຫໍພັກມີສະດວກ ວ່ອງໄວ | 2.36 | 1.02 | ໜ້ອຍ |
| 4. | ມີຢາຕອບສະໜອງກັບຄວາມຕ້ອງການຂອງນັກສຶກສາພຽງພໍ | 2.43 | 1.09 | ໜ້ອຍ |
| 5. | ມີການຍ້ອງຍໍນັກສຶກສາຫໍພັກຜູ້ທີ່ມີຜົນງານດີເດັ່ນເປັນປົກະຕິ | 2.45 | 1.09 | ໜ້ອຍ |
| 6. | ມີການປະຕິບັດສະຫວັດດີການໃຫ້ກັບນັກສຶກສາຫໍພັກ | 2.48 | 1.16 | ໜ້ອຍ |
| | **ລວມ** | **2.49** | **1.10** | **ລະດັບໜ້ອຍ** |

ຕາຕາລາງທີ 5 ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ດ້ານບຸກຄະລາກອນຮັບຜິດຊອບຫໍພັກຫໍພັກນັກສຶກສາ

| | ດ້ານບຸກຄະລາກອນຮັບຜິດຊອບຫໍພັກຫໍພັກນັກສຶກສາ | $\bar{X}$ | SD | ຄວາມເພິ່ງພໍໃຈ |
|---|---|---|---|---|
| 1. | ບຸກຄະລາກອນອໍານວຍຄວາມສະດວກໃຫ້ນັກສຶກສາເປັນຢ່າງດີ | 2.65 | 0.94 | ປານກາງ |
| 2. | ແກ້ໄຂບັນຫາໃຫ້ນັກສຶກສາໄດ້ຢ່າງວ່ອງໄວ ແລະ ຖືກ ຕ້ອງ | 2.50 | 1.07 | ໜ້ອຍ |
| 3. | ມີລະບົບຄວາມປອດໄພສູງ, ມີລະບຽບວິໄນ ແລະ ໜ້າເຊື່ອຖື | 2.37 | 1.09 | ໜ້ອຍ |
| 4. | ຂັ້ນຕອນການຕິດຕໍ່ສະດວກ ວ່ອງໄວ | 2.54 | 0.95 | ປານກາງ |
| 5. | ຫໍພັກມີຄວາມເປັນລະບຽບໃນການເຂົ້າອອກຫໍພັກຢ່າງເຂັ້ມງວດ | 2.63 | 1.06 | ປານກາງ |
| 6. | ມີມະນຸດສໍາພັນດີກັບນັກສຶກສາ ແລະ ໃຫ້ຄໍາປຶກສາຢູ່ສະເໝີ | 2.68 | 1.01 | ປານກາງ |

| | | | | |
|---|---|---|---|---|
| 7. | ໃກ້ຊິດຕິດແທດ ແລະ ແກ້ໄຂບັນຫາໃຫ້ກັບນັກສຶກສາ | 2.40 | 0.82 | ໜ້ອຍ |
| | **ລວມ** | **2.54** | **1.00** | **ປານກາງ** |

**ຕາຕາລາງທີ 6 ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ດ້ານກິດຈະກໍາ ຫໍພັກຫໍພັກນັກສຶກສາ**

| | **ດ້ານກິດຈະກຳພາຍໃນຫໍພັກຫໍພັກນັກສຶກສາ** | $\bar{X}$ | **SD** | **ຄວາມເພິ່ງພໍໃຈ** |
|---|---|---|---|---|
| 1. | ກິດຈະກໍາທີ່ຈັດຂຶ້ນເຮັດໃຫ້ເກີດມີຄວາມສາມັກຄີກັບໝູ່ເພື່ອນດີ | 2.62 | 0.93 | ປານກາງ |
| 2. | ກິດຈະກໍາທີ່ຈັດຂຶ້ນຊ່ວຍພັດທະນາບຸກຄະລິກະພາບຂອງນັກສຶກ | 2.63 | 1.06 | ປານກາງ |
| 3. | ຊ່ວຍນັກສຶກສາມີຄວາມຮັບຜິດຊອບຕໍ່ສ່ວນລວມຫຼາຍຂຶ້ນ | 2.68 | 1.07 | ປານກາງ |
| 4. | ຮູບແບບຂອງກິດຈະກໍາຫໍພັກມີຄວາມຫຼາກຫຼາຍແລະໜ້າສົນໃຈ | 2.39 | 1.04 | ໜ້ອຍ |
| 5. | ການປະຖົມນິເທດນັກສຶກສາຫໍພັກເຂົ້າໃໝ່ | 2.66 | 1.07 | ປານກາງ |
| 6. | ຈໍານວນຊົ່ວໂມງໃນການຈັດກິດຈະກໍາ | 2.48 | 1.15 | ໜ້ອຍ |
| | **ລວມ** | **2.58** | **1.06** | ປານກາງ |